ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ທະນາຄານແຫ່ງ ສປປ ລາວ

ເລກທີ: 04 /ທຫລ
ນະຄອນຫຼວງວຽງຈັນ, ວັນທີ 01 MAR 2017

ສຳນັກງານ ຄຄຊ
ເລກທີ 0238
ວັນທີ 02 MAR 2017
ໂທລະສັບ 021 217770

**ບົດສະຫຼຸບ**
**ການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ**
**ປະຈຳປີ 2016 ແລະ ທິດທາງແຜນການປີ 2017**

# ພາກທີ I

## ຕີລາຄາສະພາບການເຄື່ອນໄຫວວຽກງານທະນາຄານ ປະຈຳປີ 2016

### I. ການເຄື່ອນໄຫວວຽກງານໃນໄລຍະ 1 ປີ ຜ່ານມາ:

ໃນໄລຍະໜຶ່ງປີຜ່ານມາ ເຖິງວ່າຈະພົບກັບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນກໍຕາມ, ແຕ່ພາຍໃຕ້ການຊີ້ນຳ-ນຳພາຢ່າງໃກ້ສິດຂອງຄະນະພັກ-ຄະນະຜູ້ວ່າການທຫລແລະຄວາມເປັນເຈົ້າການ ບຸກບືນຫ້າວຫັນຂອງສະມາຊິກພັກແລະພະນັກງານລັດຖະກອນໃນຂະແໜງທະນາຄານໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນຢ່າງຕັ້ງໜ້າ ໂດຍສະເພາະການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກເວົ້າລວມ, ເວົ້າສະເພາະມະຕິກອງປະຊຸມໃຫຍ່ ຄັ້ງທີ III ຂອງອົງຄະນະພັກ ທຫລ ແລະ ການຜັນຂະຫຍາຍ ແຜນງານແລະໂຄງການຂອງທຫລ ແຕ່ປີ 2016 -2020 ຂອງບັນດາກົມທີ່ໄດ້ຮັບຮອງໃຫ້ເຂົ້າສູ່ວຽກງານຕົວຈິງ.ທຫລ ແມ່ນສືບຕໍ່ຈັດຕັ້ງປະຕິບັດໜ້າທີການເມືອງຂອງຕົນຢ່າງມີຜົນສຳເລັດ. ຜ່ານການຈັດຕັ້ງປະຕິບັດຕົວຈິງໄລຍະ 1 ປີ ຜ່ານມາສາມາດສະຫຼຸບຕີລາຄາສະພາບພົ້ນເດັ່ນໃນການເຄື່ອນໄຫວວຽກງານຂອງ ທຫລ ດັ່ງນີ້:

#### 1. ດ້ານການເມືອງ-ແນວຄິດ

ຄະນະນຳຂອງບັນດາກົມ-ທຽບເທົ່າໄດ້ເປັນເຈົ້າການສຶກສາອົບຮົມການເມືອງ-ແນວຄິດ ໃຫ້ສະມາຊິກພັກ-ພະນັກງານຢ່າງ ເປັນປົກກະຕິ ແລະ ເລິກເຊິ່ງ ດ້ວຍຮູບການຕ່າງໆທີ່ເໝາະສົມໂດຍຖືເອົາວຽກນີ້ເປັນສຳຄັນສອດທ້ອຍເຂົ້າໃນທຸກການເຄື່ອນໄຫວວຽກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ; ປະຕິບັດລະບອບການສອງ ແສງລາຍງານ ແລະ ດຳເນີນຊີວິດການເມືອງຢ່າງເປັນປົກກະຕິເພື່ອກວດກາຕີລາຄາການຈັດຕັ້ງປະຕິບັດໜ້າທີ່ວຽກງານໃນ ແຕ່ລະໄລຍະ, ຈັດຕັ້ງການຄົ້ນຄວ້າເຊື່ອມຊຶມເອກະສານທີ່ສຳຄັນຂອງພັກ, ມະຕິ, ຄຳສັ່ງ, ລະບຽບການຕ່າງໆຂອງລັດ ໃຫ້ສະມາຊິກພັກ-ພະນັກງານ ຢ່າງເປັນປົກກະຕິ-ຕໍ່ເນື່ອງໂດຍສະເພາະການຈັດຕັ້ງຄົ້ນຄວ້າເຊື່ອມຊຶມມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງພັກຢ່າງທົ່ວເຖິງ ແລະ ຈັດຕັ້ງເຜີຍແຜ່ເອກະສານສຳຄັນກໍ່ຄື ການເລົ່າມູນເຊື້ອວັນສຳຄັນຕ່າງໆ ຂອງຊາດ, ຂອງພັກ ແລະ ສາກົນ, ໄດ້ສົ່ງພະນັກງານນຳພາຫຼັກແຫຼ່ງ ຈຳນວນໜຶ່ງໄປຍົກລະດັບທາງດ້ານທິດສະດີ-ການເມືອງ ທັງຢູ່ພາຍໃນ ແລະ ຕ່າງປະເທດ ໃນລະດັບຕ່າງໆຢ່າງຕໍ່ເນື່ອງ. ຜ່ານການຈັດຕັ້ງປະຕິບັດຄືດັ່ງກ່າວ ເຮັດໃຫ້ສະມາຊິກພັກ-ພະນັກງານທົ່ວລະບົບທະນາຄານມີຄວາມສະຫງົບ,ມີຄວາມອຸ່ນອ່ຽນໃນການປະຕິບັດວຽກງານ,ມີຄວາມເຊື່ອໝັ້ນຕໍການນຳຂອງພັກ,ມີຄວາມເອກະພາບຕໍ່ແນວທາງຂອງພັກ-ລັດຫຼາຍຂຶ້ນ,ມີຄວາມ